ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# 5 ປີ ມີຜຶດຕິກຳສໍ້ລາດບັງຫຼວງ 762 ຄົນ

ໃນກອງປະຊຸມ ຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX; ທ່ານ ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານຜົນການເຄື່ອນໄຫວວຽກງານກວດກາລັດຕະຫຼອດໄລຍະ 5 ປີ (2016-2020) ພາຍໃຕ້ການຈັດຕັ້ງຜັນຂະຫຍາຍມະຕິ IX ຂອງພັກໄດ້ຮັບຜົນສຳເລັດໃນຫຼາຍດ້ານ ໂດຍສະເພາະໄດ້ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳກ່ຽວກັບວຽກງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງທັງໝົດ 8 ສະບັບ. ພ້ອມນັ້ນ, ຍັງດຳເນີນການຕິດຕາມ-ກວດກາປົກກະຕິ, ກວດກາຕາມຄຳສັ່ງ, ຄຳຮ້ອງ-ຄຳສະເໜີ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ແລະ ຕາມຜົນການກວດສອບເປັນຕົ້ນຕິດຕາມ-ກວດກາການປະຕິບັດພາລະບົດບາດ, ສິດໜ້າທີ່, ການປະຕິບັດກົດໝາຍ, ຂໍ້ກຳນົດ, ຄຳສັ່ງ, ການປະຕິບັດແຜນງົບປະມານ, ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ. ການຄຸ້ມຄອງ-ນຳໃຊ້ຊັບສິນຂອງລັດເຊັ່ນ: ທີ່ດິນ, ການຂຸດຄົ້ນ ແລະ ທຸລະກິດໄມ້, ການສຳຫຼວດ-ຂຸດຄົ້ນແຮ່ທາດ ແລະ ອື່ນໆລວມທັງໝົດທີ່ໄດ້ກວດກາໃນ 5 ປີ ຜ່ານມາມີ 4.129 ເປົ້າໝາຍ, ໃນນີ້ຕິດຕາມ-ກວດກາປົກກະຕິ 1.435 ເປົ້າໝາຍ, ກວດກາຕາມຄຳສັ່ງ 1.014 ເປົ້າໝາຍ, ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ 535 ເປົ້າໝາຍ ແລະ ກວດກາຕາມຜົນການກວດສອບ 1.145 ເປົ້າໝາຍ.

ນອກນີ້ ຍັງເກັບກຳ ແລະ ກວດກາໄລ່ລຽງມູນຄ່າການລົງທຶນຂອງລັດຕາມແຈ້ງການຂອງລັດຖະບານໃນທົ່ວປະເທດ 4.601 ໂຄງການ, ໃນນີ້ກວດກາສຳເລັດແລ້ວ 692 ໂຄງການ 44.612,17 ຕື້ກີບ. ຜ່ານການຕິດຕາມ, ກວດກາພົບເຫັນການເສຍຫາຍທັງໝົດ 5.689 ຕື້ກວ່າກີບ; 31,77 ລ້ານກວ່າໂດລາສະຫະລັດ; 36,89 ລ້ານບາດ, ລົດໃຫຍ່ໄດ້ 5 ຄັນ; ສາມາດເກັບກູ້ເງິນຄືນມາໃຫ້ລັດໄດ້ 1.064 ຕື້ກວ່າກີບ; 2,93 ລ້ານກວ່າໂດລາ; 11,16 ລ້ານກວ່າບາດ ແລະ ລົດໃຫຍ່ 4 ຄັນ.

ຂະນະດຽວກັນ, ຍັງມີກວດກາການຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ ພົບເຫັນການລະເມີດກົດໝາຍເປັນຕົ້ນຢູ່ຕາມລຽບຊາຍແດນ, ເຂດຫ່າງໄກສອກຫຼີກມີການລັກລອບຕັດໄມ້, ລັກສົ່ງໄມ້ເຂົ້າໂຮງງານ ແລະ ສົ່ງຜະລິດຕະພັນໄມ້ໄປຕ່າງປະເທດບໍ່ຖືກຕ້ອງຕາມກົດຫມາຍ, ຊຶ່ງພົວພັນນຳພະນັກງານລັດ, ຜູ້ປະກອບການ ແລະ ປະຊາຊົນທັງໝົດ 1.119 ຄົນ, ໃນນີ້ມີພະນັກງານລັດ 127 ຄົນ, ຜູ້ປະກອບການ 246 ຄົນ, ປະຊາຊົນ 746 ຄົນ; ຍຶດໄມ້ໄດ້ 11.351,75 ແມັດກ້ອນ ແລະ 33,17 ໂຕນ, ປັບໃໝ 22,28 ຕື້ກີບ; ພົບເຫັນໄມ້ 121.120,861 ແມັດກ້ອນ, ເງິນຄ້າງຈ່າຍພັນທະ ແລະ ຄ່າຊື້ໄມ້ນຳລັດມູນຄ່າ 66,57 ຕື້ກີບ ແລະ 4,87 ລ້ານໂດລາ.

ກວດກາ ແລະ ດຳເນີນການສືບສວນ-ສອບສວນຜູ້ທີ່ມີພຶດຕິກຳສໍ້ລາດບັງຫຼວງທັງໝົດ 762 ຄົນ (ພະນັກງານລັດ 310 ຄົນ, ພະນັກງານລັດວິສາຫະກິດ 338 ຄົນ, ພະນັກງານບໍລິສັດ 103 ຄົນ, ປະຊາຊົນ 11 ຄົນ); ຖືກດຳເນີນຄະດີ 140 ຄົນ (ພະນັກງານລັດ 58 ຄົນ, ລັດວິສາຫະກິດ 42 ຄົນ, ບໍລິສັດເອກະຊົນ 34 ຄົນ, ປະຊາຊົນ 6 ຄົນ); ໄດ້ສະຫຼຸບຄະດີສົ່ງໃຫ້ໄອຍະການ 107 ຄົນ (ພະນັກງານລັດ 49 ຄົນ, ລັດວິສາຫະກິດ 26 ຄົນ, ພະນັກງານບໍລິສັດ 27 ຄົນ, ປະຊາຊົນ 5 ຄົນ); ສານຕັດສິນແລ້ວ 79 ຄົນ (ພະນັກງານລັດ 40 ຄົນ, ລັດວິສາຫະກິດ 16 ຄົນ, ບໍລິສັດເອກະຊົນ 22 ຄົນ, ປະຊາຊົນ 1 ຄົນ); ແກ້ໄຂທາງບໍລິຫານທັງໝົດ 614 ຄົນ (ພະນັກງານລັດ 254 ຄົນ, ລັດວິສາຫະກິດ 288 ຄົນ, ບໍລິສັດເອກະຊົນ 72 ຄົນ ); ພົບເຫັນການເສຍຫາຍທັງໝົດ 378,783 ຕື້ກ່ວາກີບ ແລະ ມີເງິນຕາຕ່າງປະເທດຈຳນວນໜຶ່ງ; ເກັບກູ້ທຶນໄດ້ 370,929 ຕື້ກ່ວາກີບ; 26.029.096 ບາດ; 11.097 ໂດລາເຫຼືອນັ້ນແມ່ນຍັງຄ້າງ.

ພ້ອມນັ້ນ, ຍັງໄດ້ຮັບຄຳຮ້ອງ-ຄຳສະເໜີທັງໝົດ 4.817 ສະບັບໃນນີ້ໄດ້ຄົ້ນຄວ້າພິຈາລະນາແກ້ໄຂແລ້ວ 1.524 ສະບັບ, ສົ່ງໃຫ້ພາກສ່ວນອື່ນແກ້ໄຂ 1.581 ສະບັບ, ແຈ້ງຕອບຕໍ່ຜູ້ຍື່ນຄຳຮ້ອງ 155 ສະບັບ, ເກັບມ້ຽນເພື່ອຕິດຕາມ 273 ສະບັບ, ຍັງຄ້າງ 1.284 ສະບັບ. ຄຳສະເໜີທີ່ພົ້ນເດັ່ນແມ່ນຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ເຮືອນ, ການດຳເນີນທຸລະກິດ, ບໍ່ພໍໃຈຕໍ່ຄຳຕັດສິນຂອງສານ, ການປະຕິບັດຄຳຕັດສິນຂອງສານ, ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດ ແລະ ບັນຫາອື່ນໆ. ນອກນີ້, ຍັງໄດ້ຕິດຕາມ-ຊຸກຍູ້ຢ່າງຕໍ່ເນື່ອງໃຫ້ຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນເອົາໃຈໃສ່ແກ້ໄຂຜົນການກວດກາທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຖືກຕ້ອງ ແລະ ເຂັ້ມງວດຕາມກົດໝາຍ ແລະ ລະບຽບການຕ່າງໆ, ມີຫຼາຍບ່ອນກໍ່ເອົາໃຈໃສ່ແກ້ໄຂຢ່າງຖືກຕ້ອງ, ເຂັ້ມງວດ ແລະ ທັນເວລາ ແລະ ຍັງໄດ້ປະຕິບັດວຽກງານສຳຄັນອື່ນໆ ທີ່ຕິດພັນກັບການກວດກາລັດໃນແຕ່ລະໄລຍະຢ່າງມີຜົນດີ.

# ຂ່າວ: ຣັດສະໝີ ດວງສັດຈະ